# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ.........................................ໜ້າ 01 - 06**

**II. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກ........ໜ້າ 07- 10**

**III. ການເຄື່ອນໄຫວວຽກງານ ຂອງອົງການຈັດຕັ້ງມະຫາຊົນ...........................ໜ້າ 11**


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ **ສິງຫາ** 2021


**ສຳນັກງານຕັ້ງຢູ່ບ້ານ ສີວິໄລເມືອງໄຊ ,ທານີນະຄອນຫຼວງວຽງຈັນ ໂທລະສັບ , 021 417470,**

**Fax 021 414043, Email :Ri.dept.la@Gmail.com, Website :www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຢູ່ ສປປ ລາວ

### 1) ກອງປະຊຸມວິສາມັນ ເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ IX

ກອງປະຊຸມສະໄໝວິສາມັນ ເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການ ໃນວັນທີ 5 ສິງຫາ 2021 ຢູ່ສະພາແຫ່ງຊາດ ພາຍໃຕ້ການເປັນປະທານຂອງ ທ່ານ ໄຊສົມພອນ ພົມວິຫານ, ປະທານສະພາແຫ່ງຊາດ ແລະ ໃຫ້ກຽດເຂົ້າຮ່ວມຂອງ ທ່ານ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດແຫ່ງ ສປປ ລາວ, ທ່ານ ພັນຄໍາ ວິພາວັນ, ນາຍົກລັດຖະມົນຕີ, ມີບັນດາອະດີດການນໍາພັກ-ລັດ ເຂົ້າຮ່ວມ, ເຊິ່ງກອງປະຊຸມ ໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສໍາຄັນພື້ນຖານ ເປັນຕົ້ນແມ່ນ ບົດລາຍງານຂອງລັດຖະບານກ່ຽວກັບວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ການແກ້ໄຂບັນຫາຢາເສບຕິດ; ຮ່າງກົດໝາຍ 5 ສະບັບ ຄື: ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍອາກອນລາຍໄດ້, ກົດໝາຍວ່າດ້ວຍອາກອນຊົມໃຊ້ ແລະ ກົດໝາຍວ່າດ້ວຍຢາເສບຕິດ; ໄດ້ຮັບຟັງການລາຍງານກ່ຽວກັບສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ມາດຕະການແກ້ໄຂຜົນກະທົບຈາກພະຍາດດັ່ງກ່າວ.

### 2) ປະທານປະເທດ ສສ ຫວຽດນາມ ຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ

ແຕ່ວັນທີ 9-10 ສິງຫາ 2021, ສະຫາຍ ຫງວຽນ ຊວັນ ຟຸກ, ກໍາມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ ປະທານປະເທດ ແຫ່ງ ສສ ຫວຽດນາມ ພ້ອມດ້ວຍພັນລະຍາ ແລະ ຄະນະຜູ້ແທນຂັ້ນສູງ ໄດ້ເດີນທາງມາຢ້ຽມຢາມສັນຖະວະໄມຕີ ສປປ ລາວ ຢ່າງເປັນທາງການ ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງປະເທດລາວ ແລະ ຫວຽດນາມ ໂດຍການຕ້ອນຮັບຂອງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່, ປະທານປະເທດແຫ່ງ ສປປ ລາວ. ໃນການພົບປະຄັ້ງນີ້, ສອງຝ່າຍເຫັນດີເປັນເອກະພາບ ໃຫ້ສອງລັດຖະບານ ລາວ ແລະ ຫວຽດນາມ ຕິດຕາມ, ກວດກາ, ຊຸກຍູ້ ການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງ ຂອງສອງກົມການເມືອງສູນກາງພັກ ກໍຄືບັນດາໂຄງການທີ່ສອງລັດຖະບານໄດ້ຕົກລົງຮ່ວມກັນ ໂດຍສະເພາະໂຄງການກໍ່ສ້າງເສັ້ນທາງລົດໄຟ ວຽງຈັນ-ຫວຸງອ່າງ, ໂຄງການທາງດ່ວນວຽງຈັນ-ຮ່າໂນ້ຍ, ໂຄງການສະໜາມບິນໜອງຄ້າງ, ໂຄງການທ່າເຮືອຫວຸງອ່າງ, ໂຄງການຊື້-ຂາຍໄຟຟ້າ; ການພັດທະນາຊັບພະຍາກອນມະນຸດ ແລະ ໂຄງການອື່ນໆ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ; ເຫັນດີເສີມຂະຫຍາຍມູນເຊື້ອອັນດີງາມ ກົນໄກການຮ່ວມມືລະຫວ່າງ ຫວຽດນາມ-ລາວ-ກໍາປູເຈຍ; ເຫັນດີເສີມຂະຫຍາຍການພົວພັນຮ່ວມມື ລະຫວ່າງ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນຂອງສອງປະເທດ. ພ້ອມກັນນີ້ ໄດ້ເນັ້ນໃຫ້ບັນດາພາກສ່ວນທີ່ກ່ຽວຂ້ອງ ຂອງສອງປະເທດ ກະກຽມການສະເຫຼີມສະຫຼອງ ປີສາມັກຄີມິດຕະພາບ ໃນປີ 2022, ວັນສ້າງຕັ້ງສາຍພົວພັນການທູດ ລາວ-ຫວຽດນາມ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລາວ-ຫວຽດນາມ ຄົບຮອບ 45 ປີ ໃຫ້ມີບັນຍາກາດຟົດຟື້ນເຕັມໄປດ້ວຍເນື້ອໃນ ແລະ ມີຄວາມໝາຍ.

## 2. ສະພາບການສາກົນ

### 1) ສະພາບການລະບາດຂອງເຊື້ອພະຍາດ ໂຄວິດ - 19 ໃນທົ່ວໂລກ

ຫຼາຍປະເທດ ທົ່ວໂລກ ຍັງສືບຕໍ່ປະເຊີນກັບການແຜ່ລະບາດຮອບໃໝ່ຂອງພະຍາດໂຄວິດ-19 ລວມທັງບັນດາປະເທດອາຊີຕາເວັນອອກສ່ຽງໃຕ້ ເຊັ່ນ: ອິນໂດເນເຊຍ, ຟີລິບປິນ, ມາເລເຊຍ, ໄທ, ຫວຽດນາມ, ມຽນມາ ຕາມລໍາດັບ. ອາເມລິກາ ມີຜູ້ຕິດເຊື້ອ ແລະ ເສຍຊີວິດ ຈາກພະຍາດດັ່ງກ່າວ ເປັນອັນດັບໜຶ່ງ, ຮອງລົງມາ ແມ່ນອິນເດຍ, ອັງກິດ. ຮອດວັນທີ 31 ສິງຫາ 2021, ຜູ້ຕິດເຊື້ອທົ່ວໂລກທັງໝົດ 217,776,809 ຄົນ, ເພີ່ມຂຶ້ນ 19,765,842 ຄົນ, ເສຍຊີວິດ 4,521,979 ຄົນ ເພີ່ມຂຶ້ນ 297,855 ຄົນ, ປິ່ນປົວຫາຍດີທັງໝົດ 194,683,498 ຄົນ ເພີ່ມຂຶ້ນ 15,776,435. ບັນດາ

ປະເທດ ຕ່າງກໍໃຫ້ຄວາມສຳຄັນ ໃນການສັກວັກແຊງ ເພື່ອປ້ອງກັນການຕິດເຊື້ອພະຍາດດັ່ງກ່າວ ເຊັ່ນ: ສະຫະພາບເອີລົບ ໄດ້ສັກວັກແຊງ ໃຫ້ພົນລະເມືອງຂອງຕົນແລ້ວ 70%, ອາເມລິກາ 52%, ອິດສະລາແອນ 61%, ອັງກິດ 64%, ສິງກະໂປ 80%. ສ່ວນ ສປ ຈີນ ຈະພະຍາຍາມສະໜອງວັກແຊງ ໃຫ້ໄດ້ 2 ຕື້ໂດສ ໃຫ້ປະຊາຄົມໂລກ ໃນປີ 2021 ນີ້ ແລະ ບໍລິຈາກເງິນ 100 ລ້ານໂດລາສະຫະລັດ ໃຫ້ໂຄງການ COVAX ເພື່ອໝູນໃຊ້ໃນການຈັດສັນວັກແຊງ ໃຫ້ກັບປະເທດກຳລັງພັດທະນາ.

ສຳລັບ ສປປ ລາວ, ປັດຈຸບັນ ໄດ້ຮັບການຊ່ວຍເຫຼືອວັກແຊງ 05 ຊະນິດ ຄື: Sinopharm, sputnik, AstraZeneca, Johnson & Johnson ແລະ Pfizer ລວມທັງໝົດ 5,576,490 ໂດສ. ມາຮອດວັນທີ 31 ສິງຫາ 2021, ປະຊາຊົນລາວ ທີ່ໄດ້ຮັບວັກແຊງຄົບ 2 ເຂັມ ມີ 1,794,698 ຄົນ, ເຂັມທຳອິດ ມີ 2,443,845 ຄົນ, ຂະນະທີ່ຕົວເລກຜູ້ຕິດເຊື້ອສະສົມ 15,015 ຄົນ, ປິ່ນປົວຫາຍດີ 10,018 ຄົນ, ເສຍຊີວິດສະສົມທັງໝົດ 14 ຄົນ.

**2) ສະພາບການໃນຂົງເຂດອາຊີ-ປາຊີຟິກ**

ວັນທີ 22-26 ສິງຫາ 2021, ທ່ານ ນາງ Kamala Harris, ຮອງປະທານາທິບໍດີ ສ.ອາເມລິກາ ໄດ້ຢ້ຽມຢາມສິງກະໂປ ແລະ ຫວຽດນາມ, ໄດ້ພົບປະກັບປະທານາທິບໍດີ ແລະ ນາຍົກລັດຖະມົນຕີ ຂອງສິງກະໂປ ແລະ ຫວຽດນາມ ຕາມລຳດັບ. ກັບສິງກະໂປ ໄດ້ຮ່ວມກັນລົງນາມໃນບົດບັນທຶກຄວາມເຂົ້າໃຈຫຼາຍຂົງເຂດວຽກງານ ເປັນຕົ້ນແມ່ນ ການປ້ອງກັນການໂຈມຕີທາງອິນເຕີເນັດ, ການທະຫານ, ເສດຖະກິດ, ການຮ່ວມມືທາງດ້ານເຕັກໂນໂລຊີ, ການປົກປ້ອງພື້ນຖານໂຄງລ່າງ, ຂໍ້ມູນທາງດ້ານຄວາມໝັ້ນຄົງ, ແບ່ງປັນຂໍ້ມູນໃນການຕອບໂຕ້ການປ່ຽນແປງດິນຟ້າອາກາດ, ຄວບຄຸມການແຜ່ລະບາດຂອງພະຍາດໂຄວິດ - 19. ພ້ອມກັນນັ້ນ, ທ່ານ ນາງ Kamala Harris, ຍັງໄດ້ໄປຢ້ຽມຢາມ ແລະ ກ່າວປາໄສ ຢູ່ ຖານທັບເຮືອ Changi ເຊິ່ງເປັນຖານທັບເຮືອທີ່ສຳຄັນ ຂອງສິງກະໂປ ທີ່ ສ. ອາເມລິກາ ນຳໃຊ້ໃນການລຳລຽງຂົນສົ່ງຕ່າງໆ, ທັງເປັນຖານທັບທີ່ ຍົນຮົບ ອາເມລິກາ ສາມາດລົງຈອດໄດ້. ສິງກະໂປ ຍັງໄດ້ສະເໜີເອົາຍົນຮົບຂອງຕົນຊ່ວຍ ສ. ອາເມລິກາ ເຄື່ອນຍ້າຍກຳລັງທະຫານ ອອກຈາກອາຟະການິດສະຖານ. ກັບ ສສ ຫວຽດນາມ, ໄດ້ຕົກລົງ ເພີ່ມທະວີການຮ່ວມມືໃນຂົງເຂດເສດຖະກິດ, ການຄ້າ ແລະ ການລົງທຶນ, ຄວາມໝັ້ນຄົງ, ການແກ້ໄຂບັນຫາທີ່ຕົກຄ້າງແຕ່ປາງສົງຄາມ, ການສຶກສາ, ວິທະຍາສາດ ແລະ ເຕັກໂນໂລຊີ ແລະ ການປ້ອງກັນ ຄວບຄຸມການແຜ່ລະບາດຂອງເຊື້ອພະຍາດໂຄວິດ - 19. ທ່ານ ນາງ Kamala Harris ຍັງໄດ້ເຂົ້າຮ່ວມ ພິທີເປີດ ສູນຄວບຄຸມໂລກລະບາດ Centers For Disease and Prevention (US CDC) ເຊິ່ງເປັນສາຂາດຽວ ໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ ແລະ ສອງຝ່າຍໄດ້ເຊັນສັນຍາໃຫ້ ສ. ອາເມລິກາ ເຊົ່າທີ່ດິນຂອງຫວຽດນາມເພື່ອປຸກສ້າງສະຖານທູດຫຼັງໃໝ່ ປະຈຳຫວຽດນາມ ໃນມູນຄ່າ 1,2 ຕື້ ໂດລາ.

ໃນວັນທີ 10 ສິງຫາ 2021, ໃນຂົງເຂດທະເລຈີນໃຕ້ ມີການຊ້ອມຮົບທາງທະເລ ພາຍໃຕ້ໂຄງການຮ່ວມມື ແລະ ຝຶກຊ້ອມ ໃນອາຊີຕາເວັນອອກສຽງໃຕ້ (Southeast Asia Coorperation and Training-SEACAT), ມີເຮືອຮົບເຂົ້າຮ່ວມ 10 ລຳ ແລະ ທະຫານເຮືອຫຼາຍກວ່າ 400 ຄົນ ຈາກ 21 ປະເທດ ແລະ 03 ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (NGO) ເຂົ້າຮ່ວມເຊັ່ນ: ອາເມລິກາ, ອົດສະຕຣາລີ, ບັງກລາເທດ, ອິນເດຍ, ການາດາ, ຝຣັ່ງ, ອັງກິດ, ເຢຍລະມັນ, ຍີ່ປຸ່ນ, ນິວຊີແລນ, ສ.ເກົາຫຼີ, ສີລັງກາ, ບຣູໄນ, ມານດີວ, ອິນໂດເນເຊຍ, ຟີລິບປິນ, ສິງກະໂປ, ມາເລເຊຍ, ໄທ, ຕີມໍແລັດສະເຕ, ຫວຽດນາມ, ອົງການຕ້ານອາດຊະຍາກຳ ແລະ ຢາເສບຕິດ ສປຊ (UNODC), ຄະນະກຳມະການອົງການກາແດງສາກົນ (ICRC) ແລະ ອົງການເດີນເຮືອທາງທະເລເອີລົບ - ອິນເດຍ (CRIMARIO). ໃນຂະນະດຽວກັນ, ໃນລະຫວ່າງ ວັນທີ 26 -29/08/2021 ກຸ່ມ Quad ເຊິ່ງປະກອບມີ ອາເມລິກາ, ອົດສະຕຣາລີ, ຍີ່ປຸ່ນ ແລະ ອິນເດຍ ກໍໄດ້ຮ່ວມກັນຊ້ອມຮົບທາງທະເລປະຈຳປີ ໃສ່ຊື່ວ່າ Malabar-21 ໃນມະຫາສະໝຸດປາຊີຟິກ, ເປັນການສະແດງສັກກະຍາພາບທາງການທະຫານ ເພື່ອປ້ອງກັນຕົນເອງຈາກໄຟຂົ່ມຂູ່ຕ່າງໆ ແລະ ປົກປ້ອງຜົນປະໂຫຍດຂອງກຸ່ມໃນມະຫາສະໝຸດປາຊີຟິກ ແລະ ມະຫາສະໝຸດອິນເດຍ. ສ່ວນ ຈີນ ແລະ ລັດເຊຍ ໄດ້ຮ່ວມກັນຊ້ອມຮົບ ພາຍໃຕ້ຫົວຂໍ້ "ຮ່ວມກັນຮັກສາຄວາມປອດໄພ ແລະ ຄວາມໝັ້ນຄົງຂອງພາກພື້ນ" ຢູ່ສະຖານຝຶກ

ຊ້ອມຍຸດທະວິທີຊີງທົ່ງເຊຍ ຂອງກອງທັບຈີນ ໃນເຂດປົກຄອງຕົນເອງເຜົ່າຫຸຍ ນິງເຊຍ ເພື່ອຮ່ວມກັນຍົກລະດັບຄວາມສາມາດຂອງການສອດແນມລາດຕະເວນຮ່ວມ, ການເຕືອນໄພລ່ວງໜ້າ, ການໂຈມຕີຂໍ້ມູນຂ່າວສານເອເລັກໂຕຣນິກ ແລະ ການສົມທົບກຳລັງເພື່ອໂຈມຕີສັດຕູ.

ສະພາບພາຍໃນມາເລເຊຍ, ທ່ານ Muhyiddin Yassin, ນາຍົກລັດຖະມົນຕີ ມາເລເຊຍ ແລະ ຄະນະລັດຖະບານ ໄດ້ລາອອກຈາກຕຳແໜ່ງ ໃນວັນທີ 19 ສິງຫາ 2021 ພາຍຫຼັງບໍລິຫານປະເທດໄດ້ພຽງ 17 ເດືອນ, ຍ້ອນບັນຫາຂັດແຍ່ງພາຍໃນ ບໍ່ສາມາດຈັດການກັບການລະບາດ ຂອງພະຍາດ ໂຄວິດ-19 ເຮັດໃຫ້ປະຊາຊົນບໍ່ພໍໃຈຕໍ່ການບໍລິຫານປະເທດຂອງລັດຖະບານດັ່ງກ່າວ. ໃນວັນດຽວກັນ, ສະພາແຫ່ງຊາດມາເລເຊຍ ໄດ້ລົງຄະແນນສຽງເລືອກເອົາທ່ານ Ismail Sabri Yaakob, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນປະເທດ, ສະມາຊິກສະພາຈາກພັກເອກະພາບແຫ່ງຊາດມາເລ (UMNO) ເປັນນາຍົກລັດຖະມົນຕີຄົນໃໝ່ ດ້ວຍຄະແນນສຽງ 114/220 ບ່ອນນັ່ງ ໃນສະພາ ແລະ ໄດ້ເຂົ້າສາບານຕົນ ຮັບຕຳແໜ່ງດັ່ງກ່າວ ໃນວັນທີ 21 ສິງຫາ 2021.

ສະພາບພາຍໃນມຽນມາ ຍັງສືບຕໍ່ສັບສົນ ແລະ ຂັດແຍ່ງ ລະຫວ່າງຝ່າຍລັດຖະບານ ກັບ ຝ່າຍຄ້ານ ແລະ ບັນດາຊົນກຸ່ມນ້ອຍ ຕັ້ງແຕ່ການກໍ່ລັດຖະປະຫານ ໃນວັນທີ 1 ກຸມພາ 2021 ຜ່ານມາ. ໃນນັ້ນ, ລັດຖະບານທະຫານມຽນມາ ໄດ້ປະກາດເລື່ອນເວລາໃນການເລືອກຕັ້ງອອກໄປເປັນໄລຍະເວລາ 2 ປີ.

ພາຍໃນລາຊະອານາຈັກໄທ, ມີການປະທ້ວງຂັບໄລ່ລັດຖະບານ ຍ້ອນຄວາມບໍ່ພໍໃຈ ໃນການຈັດການກັບການລະບາດ ຂອງພະຍາດ ໂຄວິດ-19 ແລະ ບັນຫາການສັກວັກແຊງ ໃນປະເທດ.

### 3) ສະພາບການ ໃນຂົງເຂດເອີລົບ-ອາເມລິກາ

ການພົວພັນ ລະຫວ່າງລັດເຊຍ ແລະ ອາເມລິກາ ໄດ້ເກີດຄວາມເຄັ່ງຕຶງຮອບໃໝ່ ເນື່ອງຈາກຝ່າຍອາເມລິກາ ໄດ້ໃຫ້ນັກການທູດ 24 ຄົນ ຂອງລັດເຊຍ ອອກຈາກອາເມລິກາ ກ່ອນ ວັນທີ 3 ກັນຍາ 2021, ໂດຍອ້າງເຫດຜົນວ່າ ໜັງສືຜ່ານແດນຂອງພວກກ່ຽວ ໝົດອາຍຸ ແລະ ບໍ່ສາມາດຕໍ່ວີຊາໃຫ້ໄດ້ ເພາະ ອາເມລິກາ ຈຳກັດການອອກວີຊາ ໃຫ້ຄົນຕ່າງປະເທດ. ຂະນະທີ່ ທ່ານ ອັນໂຕນນົບ, ເອກອັກຄະລັດຖະທູດລັດເຊຍ ໄດ້ກ່າວວ່າ, ພະນັກງານ ແລະ ນັກການທູດລັດເຊຍ ຖືກບັງຄັບພາຍໃຕ້ເງື່ອນໄຂຈຳກັດທີ່ບໍ່ເຄີຍມີມາກ່ອນ, ຮຽກຮ້ອງໃຫ້ ອາເມລິກາ ເຄົາລົບສົນທິສັນຍາກຸງວຽນກ່ຽວກັບການພົວພັນການທູດ ແລະ ຄວາມສຳພັນລະຫວ່າງສອງປະເທດ.

ໃນວັນທີ 22 ສິງຫາ 2021, ທ່ານ Nicolás Maduro, ປະທານາທິບໍດີເວເນຊູເອລາ ໄດ້ປັບປຸງຄະນະລັດຖະບານ ໂດຍໄດ້ແຕ່ງຕັ້ງ ທ່ານ Félix Plasencia, ເປັນລັດຖະມົນຕີກະຊວງການຕ່າງປະເທດ; ທ່ານ Jorge Arreaza, ເປັນລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຜະລິດແຫ່ງຊາດ; ທ່ານ ພົນເຮືອເອກ Remigio Ceballos, ເປັນລັດຖະມົນຕີກະຊວງພາຍໃນ, ຍຸຕິທຳ ແລະ ສັນຕິພາບ ແລະ ເປັນຮອງປະທານເພື່ອຄວາມໝັ້ນຄົງຂອງພົນລະເມືອງ; ທ່ານ ນ. Yelitze Santaella, ອ່າການເຈົ້າຄອງລັດ Monagas ເປັນລັດຖະມົນຕີກະຊວງສຶກສາ; ທ່ານ ນ. Margaud Godoy, ເປັນຫົວໜ້າຫ້ອງການຄວາມສະເໝີພາບຍິງ-ຊາຍ; ທ່ານ ພົນເຮືອເອກ William Serantes, ເປັນລັດຖະມົນຕີກະຊວງພັດທະນາບໍ່ແຮ່; ທ່ານ Melvin Maldonado, ເປັນຫົວໜ້າຄະນະບໍລິຫານງານຊາວໜຸ່ມ ແລະ ກິລາ.

ກອງປະຊຸມສະພາຄວາມໝັ້ນຄົງ ສປຊ ວັນທີ 10 ສິງຫາ 2021 ຜ່ານມາ, ພາຍໃຕ້ການເປັນປະທານຂອງທ່ານ ນາເຣນດຼາ ໂມດີ, ນາຍົກລັດຖະມົນຕີອິນເດຍ ໄດ້ຮ່ວມກັນປຶກສາຫາລືໃນຫົວຂໍ້ ກ່ຽວກັບຄວາມທ້າທາຍ ແລະ ໄພຂົ່ມຂູ່ຕໍ່ຄວາມໝັ້ນຄົງທາງທະເລ; ການຮ່ວມມື ເພື່ອປ້ອງກັນການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ. ທ່ານ ແອນໂທນີ ບຣິງເກັນ, ລັດຖະມົນຕີຕ່າງປະເທດ ອາເມລິກາ ໄດ້ຍົກບັນຫາທະເລຈີນໃຕ້ຂຶ້ນມາປຶກສາຫາລື ແລະ ມີຄຳເຫັນວ່າ : ການເຄື່ອນໄຫວຂອງຈີນ ໃນພາກພື້ນດັ່ງກ່າວ ເປັນໄພຄຸກຄາມຕໍ່ອະທິປະໄຕຂອງບັນດາປະເທດໃນທະເລຈີນໃຕ້, ເປັນໄພຂົ່ມຂູ່ຕໍ່ຄວາມໝັ້ນຄົງ ແລະ ການຄ້າ ຂອງພາກພື້ນດັ່ງກ່າວ. ທ່ານ Dai Bing, ຮອງຫົວໜ້າສຳນັກງານຜູ້ຕາງໜ້າຖາວອນ ແຫ່ງ ສປ ຈີນ ປະຈຳ ສປຊ ໄດ້ມີຄຳເຫັນຕອບໂຕ້ ວ່າ ອາເມລິກາ ໄດ້ສົ່ງເຮືອຮົບ ແລະ ເຄື່ອງບິນຮົບ

ເຂົ້າມາທະເລຈີນໃຕ້ ແມ່ນເປັນການກະທຳທີ່ບຸແຍ່ ແລະ ເປັນໄພຂົ່ມຂູ່ຕໍ່ສະຖຽນລະພາບ ແລະ ຄວາມໝັ້ນຄົງໃນທະເລຈີນໃຕ້, ຮຽກຮ້ອງໃຫ້ ອາເມລິກາ ຢຸດຕິການແຊກແຊງອະທິປະໄຕຂອງປະເທດອື່ນ ເພື່ອສັນຕິພາບໃນພາກພື້ນ. ສ່ວນທ່ານ ວາລະດີເມຍ ປູຕິນ, ປະທານາທິບໍດີ ລັດເຊຍ ໄດ້ມີຄຳເຫັນຕໍ່ກອງປະຊຸມວ່າ "ພວກເຮົາຕ້ອງຮ່ວມມືກັນເພື່ອແກ້ໄຂການລະເມີດລິຂະສິດ, ຕ້ານອາດຊະຍາກຳຂ້າມຊາດ, ການນຳໃຊ້ທະເລ ແລະ ມະຫາສະໝຸດໃຫ້ເກີດປະໂຫຍດສູງສຸດ, ບັນດາອົງການຈັດຕັ້ງສາກົນ ແລະ ສະມາຄົມຂອງພາກພື້ນຕ່າງໆ ຕ້ອງເປັນເຈົ້າການປະສານງານ ຕາມກົດບັດ ສປຊ ແລະ ມະຕິ ຂອງສະພາຄວາມໝັ້ນຄົງ ສປຊ ວາງອອກ. ລັດເຊຍ ຍາມໃດ ກໍຍຶດໝັ້ນກົດບັດ ສປຊ, ເຄົາລົບອະທິປະໄຕ, ບໍ່ແຊກແຊງວຽກງານພາຍໃນຂອງປະເທດອື່ນ ແລະ ແກ້ໄຂຂໍ້ຂັດແຍ່ງດ້ວຍການເຈລະຈາຢ່າງສັນຕິວິທີ; ລັດເຊຍ ຈະສ້າງຄູ່ຮ່ວມມືກັບອິນເດຍ ໃນມະຫາສະໝຸດອິນເດຍ, ຮັກສາຄວາມໝັ້ນຄົງເຂດອ່າວເປີເຊຍ, ອ່າວກີເນຍ ໃນມະຫາສະໝຸດອັດລັງຕິກ.

**4) ສະພາບການໃນຂົງເຂດຕາເວັນອອກກາງ**

ພາຍຫຼັງອາເມລິກາ ໄດ້ຖອນທະຫານຂອງຕົນ ອອກຈາກອາຟະການິດສະຖານ, ເຮັດໃຫ້ ກຸ່ມຕາລີບັນ ສາມາດຍຶດນະຄອນຫຼວງກາບູນ ກໍຄືຂອບເຂດທົ່ວປະເທດອາຟະການິດສະຖານ ໄດ້ ໃນວັນທີ 15 ສິງຫາ 2021, ສ່ວນປະທານາທິບໍດີ Ashraf Ghani ແລະ ຮອງປະທານາທິບໍດີ ໄດ້ລົບໜີອອກນອກປະເທດ. ປັດຈຸບັນ, ກຸ່ມຕາລີບັນກະກຽມປະກາດຈັດຕັ້ງລັດຖະບານອິດສະລາມ ເອມີເຣດ ອາຟະການິດສະຖານ ຂອງຕົນຂຶ້ນ, ເຊິ່ງເປັນຊື່ເດີມ ໃນສະໄໝຕາລີບັນ ເປັນລັດຖະບານອາຟະການິດສະຖານ ແຕ່ປີ 1989-2001. ການຈັດຕັ້ງລັດຖະບານຊຸດໃໝ່ ຈະປະກອບມີຊາວອາຟະການິດສະຖານ ທີ່ບໍ່ເປັນສະມາຊິກຂອງກຸ່ມຕາລີບັນ, ລວມເຖິງບຸກຄົນທີ່ມີຊື່ສຽງອື່ນໆ; ສຳລັບເຈົ້າໜ້າທີ່ທະຫານ ແລະ ຕຳຫຼວດ ຂອງລັດຖະ ບານຊຸດເກົ່າ ຈະໄດ້ຮັບການຍົກເວັ້ນໂທດ ແລະ ໄດ້ຮັບຄວາມປອດໄພ ຖ້າຫາກຍອມຮ່ວມມືກັບກຸ່ມຕາລີບັນ; ພົນລະເຮືອນ ສາມາດດຳລົງຊີວິດໄດ້ຕາມປົກກະຕິ; ກຸ່ມຕາລີບັນ ຢັ້ງຢືນຮັບປະກັນຄວາມປອດໄພ ໃຫ້ແກ່ບັນດາສະຖານທູດ ແລະ ນັກການທູດຕ່າງປະເທດ ທີ່ປະຕິບັດງານ ຢູ່ອາຟະການິດສະຖານ. ເຖິງແມ່ນວ່າ ກຸ່ມຕາລີບັນ ຈະອອກຖະແຫຼງການວ່າ ລັດຖະບານຊຸດນີ້ ຈະແຕກຕ່າງຈາກລັດຖະບານຂອງຕາລີບັນຊຸດກ່ອນ, ຈະໃຫ້ໂອກາດ ແມ່ຍິງ ແລະ ເດັກນ້ອຍ, ເຄົາລົບສິດທິມະນຸດ, ແຕ່ກໍມີປະຊາຊົນອາຟະການິດສະຖານ ກວ່າ 150,000 ຄົນເດີນທາງອອກນອກປະເທດ ໂດຍໄດ້ຮັບການຊ່ວຍເຫຼືອໃນການເດີນທາງ ຈາກອາເມລິກາ ແລະ ພັນທະມິດ. ໃນວັນທີ 26 ແລະ 30 ສິງຫາ 2021 ຂະນະທີ່ ສະໜາມບິນ ໃນນະຄອນຫຼວງກາບູນ ອາຟະການິດສະຖານ ໄດ້ແອອັດໄປດ້ວຍຜູ້ຄົນ ທີ່ປະສົງອອກນອກປະເທດພ້ອມກັບເຮືອບິນຂອງອາເມລິກາ, ໄດ້ເກີດເຫດລະເບີດຂ້າຕົວຕາຍ ໃກ້ກັບສະໜາມບິນດັ່ງກ່າວ 2 ຄັ້ງ, ເຊິ່ງ ກຸ່ມ ISk ອ້າງຄວາມຮັບຜິດຊອບ, ເຮັດໃຫ້ປະຊາຊົນເສຍຊີວິດ 169 ຄົນ, ທະຫານອາເມລິກາ ເສຍຊີວິດ 13 ຄົນ, ອາເມລິກາ ໄດ້ຍິງໂຈມຕີທາງອາກາດໃສ່ກຸ່ມດັ່ງກ່າວ ແລະ ສາມາດຄວບຄຸມສະຖານະການໄດ້, ອາເມລິກາ ສາມາດຖອນທະຫານຂອງຕົນສຳເລັດ ໃນວັນທີ 31 ສິງຫາ 2021 ຕາມຄາດໝາຍ. ກຸ່ມຕາລີບັນ ໄດ້ພາກັນສະຫຼອງຄວາມສຳເລັດ ທີ່ອາຟະການິດສະຖານ ເປັນເອກະລາດ ແລະ ວ່າ ຕາລີບັນ ພ້ອມທີ່ຈະຮ່ວມມືກັບ ຈີນ, ລັດເຊຍ ລວມທັງອາເມລິກາ ແລະ ປະເທດອື່ນໆ ເພື່ອສົ່ງເສີມເສດຖະກິດພາຍໃນ ແລະ ພ້ອມທີ່ຈະຕ້ານກັບທຸກກຸ່ມກໍ່ການຮ້າຍ; ອາຟະການິດສະຖານ ຕໍ່ຈາກນີ້ ຈະຢູ່ພາຍໃຕ້ການບໍລິຫານຮູບແບບໃໝ່ ຂອງລັດຖະບານຕາລີບັນ.

ສະພາບການໃນເຢເມນ, ໃນວັນທີ 30 ສິງຫາ ຜ່ານມາ, ກຸ່ມຮູຕີ ໄດ້ຍິງຂີປະນາວຸດ 3 ລູກ ໂຈມຕີກອງທັບອາກາດເຢເມນ ເຮັດໃຫ້ມີຜູ້ເສຍຊີວິດ 40 ຄົນ, ບາດເຈັບ 70 ຄົນ. ເຫດການໃນລັກສະນະນີ້ ເກີດຂຶ້ນຫຼາຍຄັ້ງແລ້ວ, ຍ້ອນຄວາມຂັດແຍ່ງໃນສາສະໜາອິດສະລາມ ລະຫວ່າງກຸ່ມຮູຕີ ທີ່ຫຼາຍຝ່າຍອ້າງວ່າ ມີອີຣານ ຢູ່ເບື້ອງຫຼັງ ແລະ ລັດຖະບານເຢເມນ ທີ່ມີ ອາຣັບບີ ຊາອຸດີ ໃຫ້ການສະໜັບສະໜູນ. ຄືກັນກັບເຫດການໂຈມຕີໂຮງກັ່ນນ້ຳມັນ 2 ແຫ່ງ ຂອງອາຣັບບີ ຊາອຸດີ ໃນເດືອນກັນຍາ 2019, ເຊິ່ງຄາດວ່າແມ່ນ ກຸ່ມຮູຕີ ເປັນຜູ້ຢູ່ເບື້ອງຫຼັງ.

ນອກຈາກນີ້ ຍັງມີການໂຈມຕີກຳປັ່ນນ້ຳມັນ ທີ່ມີຊື່ວ່າ Mercer Street ຢູ່ໃນຂົງເຂດແຄມຝັ່ງທະເລຂອງ ໂອມານ ໃນວັນທີ 29 ກໍລະກົດ 2021 ຜ່ານມາ ເຊິ່ງເຮັດໃຫ້ພົນລະເມືອງອັງກິດ ແລະ ຣູມານີ ຈຳນວນ 02 ຄົນເສຍຊີວິດ.

ທ່ານ Dominic Raab, ລັດຖະມົນຕີກະຊວງການຕ່າງປະເທດອັງກິດ ໄດ້ກ່າວວ່າ ອີຣານ ເປັນຜູ້ຢູ່ເບື້ອງຫຼັງເຫດການດັ່ງກ່າວ ແລະ ວ່າ ການກະທຳດັ່ງກ່າວ ແມ່ນລະເມີດກົດໝາຍສາກົນ. ຂະນະດຽວກັນ, ໂຄສົກກະຊວງຕ່າງປະເທດອີຣານ ໄດ້ປະຕິເສດຂໍ້ກ່າວຫາທີ່ບໍ່ມີຫຼັກຖານດັ່ງກ່າວ ພ້ອມທັງກ່າວວ່າ ເປັນການເຜີຍແຜ່ຂ່າວບໍ່ມີມູນຄວາມຈິງຂອງອິດສະຣາແອນ ເພື່ອສ້າງຄວາມບໍ່ສະຫງົບໃນຂົງເຂດຕາເວັນອອກກາງ ແລະ ເປັນການໂຈມຕີອີຣານ.

**3. ການເຄື່ອນໄຫວຂອງບັນດາພັກເພື່ອນມິດຍຸດທະສາດ**

**1) ພັກກອມມູນິດຫວຽດນາມ**

ວັນທີ 5/8/2021, ຄະນະຊີ້ນຳຂັ້ນສູນກາງ ກ່ຽວກັບ ການປ້ອງກັນ, ຕ້ານການສໍ້ລາດບັງຫຼວງຂອງ ສສ ຫວຽດນາມ ໄດ້ດຳເນີນກອງປະຊຸມ ຄັ້ງທີ 20 ຂອງຕົນຂຶ້ນ ທີ່ນະຄອນຫຼວງຮ່າໂນ້ຍ, ໂດຍການເປັນປະທານຂອງສະຫາຍ ຫງວຽນຟູຈ້ອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ຫົວໜ້າຄະນະຊີ້ນຳຂັ້ນສູນກາງກ່ຽວກັບ ການປ້ອງກັນ, ຕ້ານການສໍ້ລາດບັງຫຼວງ. ກອງປະຊຸມໄດ້ຕີລາຄາ ຜົນຂອງການຈັດຕັ້ງປະຕິບັດວຽກງານໄລຍະ 6 ເດືອນຕົ້ນປີ, ກຳນົດໜ້າທີ່ຈຸດສຸມໃນ 6 ເດືອນທ້າຍປີ 2021 ແລະ ພິຈາລະນາຕົກລົງບັນຫາສຳຄັນອື່ນໆ. ສະຫາຍ ຫງວຽນຟູຈ້ອງ ໄດ້ເນັ້ນໜັກວ່າ ໃນໄລຍະຜ່ານມາ ວຽກງານປ້ອງກັນ, ຕ້ານການສໍ້ລາດບັງຫຼວງ ເປັນຄວາມຕັດສິນໃຈສູງຂອງພັກ, ລັດຖະບານຫວຽດນາມ, ເປັນວຽກທີ່ມີບົດຮຽນມາແລ້ວ ແມ່ນສືບຕໍ່ເຮັດຢ່າງຕໍ່ເນື່ອງໝັ້ນແກ່ນ, ມີແບບແຜນ, ກາຍເປັນຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ, ເປັນໜ້າທີ່ໜຶ່ງ ທີ່ຕ້ອງປະຕິບັດຢ່າງເປັນປະຈຳ, ເປັນທ່າອຽງໜຶ່ງ ແລະ ເປັນຂະບວນການໜຶ່ງທີ່ຈຳເປັນຕ້ອງເຮັດ, ບໍ່ຢຸດເຊົາ, ບໍ່ມີການຍົກເວັ້ນ ເປັນຕົ້ນ ໃນໄລຍະ 6 ເດືອນຕົ້ນປີ 2021, ບັນດາຄະນະພັກ, ຄະນະກວດກາຂັ້ນຕ່າງໆ ໄດ້ຖືກປະຕິບັດວິໄນຫຼາຍກວ່າ 70 ການຈັດຕັ້ງ, ສະມາຊິກພັກຫຼາຍກວ່າ 8.000 ຄົນທີ່ມີການກະທຳຜິດ.

ຄະນະກວດກາສູນກາງພັກກອມມູນິດຫວຽດນາມ ສະໄໝທີ XIII ໄດ້ດຳເນີນກອງປະຊຸມ ຄັ້ງທີ 5 ໃນລະຫວ່າງ ວັນທີ 2-4/8/2021 ໂດຍການເປັນປະທານຂອງ ສະຫາຍ ເຈິນເກິມຕູ໋, ກຳມະການກົມການເມືອງ, ເລຂາທິການສູນກາງພັກ, ປະທານຄະນະກວດກາສູນກາງພັກກອມມູນິດຫວຽດນາມ. ກອງປະຊຸມໄດ້ພິຈາລະນາ ແລະ ສະຫຼຸບຜົນການຈັດຕັ້ງປະຕິບັດໜ້າທີ່ວຽກງານໃນໄລຍະຜ່ານມາດັ່ງນີ້: 1) ຜົນຂອງການກວດກາ, ແກ້ໄຂບັນດາການຈັດຕັ້ງພັກ, ສະມາຊິກພັກ ທີ່ມີການກະທຳຜິດໃນທຸກກໍລະນີ, ຕິດຕາມຄະດີ ທີ່ນອນໃນຄວາມຮັບຜິດຊອບຂອງຄະນະຊີ້ນຳຂັ້ນສູນກາງກ່ຽວກັບ ການປ້ອງກັນ, ຕ້ານການສໍ້ລາດບັງຫຼວງ; 2) ພິຈາລະນາກ່ຽວກັບ ບັນດາສະຫາຍຄະນະປະຈຳພັກແຂວງ ຮ່ານາມ, ເຮົ້າຢາງ ທີ່ມີການກະທຳຜິດ, ມີຈຸດອ່ອນ, ຂໍ້ຈຳກັດໃນການຊີ້ນຳ-ນຳພາ ແລະ ປະຕິບັດວຽກງານຄຸ້ມຄອງ, ຂຸດຄົ້ນບໍ່ແຮ່ ຢູ່ແຂວງຮ່ານາມ ແລະ ໃນວຽກງານຄຸ້ມຄອງ, ຈັດຊື້ເຄື່ອງມືອຸປະກອນການແພດ, ຢາປົວພະຍາດ ຢູ່ແຂວງເຮົ້າຢາງ; 3) ພິຈາລະນາຄຳຮ້ອງທຸກ ຕໍ່ການປະຕິບັດວິໄນພັກ ໃນບາງກໍລະນີຢູ່ແຂວງລ້າງເຊີນ ເຊິ່ງຄະນະກວດກາສູນກາງພັກ ໄດ້ສະເໜີພິຈາລະນາ, ສະຫຼຸບ ແລະ ປະຕິບັດວິໄນ ຕໍ່ບາງການຈັດຕັ້ງພັກ ແລະ ສະມາຊິກພັກທີ່ກ່ຽວຂ້ອງ.

**2) ພັກກອມມູນິດຈີນ**

ວັນທີ 30/07/2021, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດແຫ່ງ ສປ ຈີນ ໄດ້ເປັນປະທານກອງປະຊຸມ ກົມການເມືອງສູນກາງພັກກອມມູນິດຈີນ ເພື່ອຕີລາຄາກ່ຽວກັບ ສະພາບເສດຖະກິດ ປະຈຳ 6 ເດືອນຕົ້ນປີ ແລະ ວາງແຜນວຽກງານເສດຖະກິດ ໃນ 6 ເດືອນທ້າຍປີ 2021, ເພີ່ມຄວາມເຂັ້ມແຂງໃນການດຳເນີນການປະຕິຮູບ, ຍຶດໝັ້ນໃນການເປີດປະຕູສູ່ພາຍນອກໃນລະດັບສູງ, ຍຶດໝັ້ນໃນການຊຸກຍູ້ການຮ່ວມກັນສ້າງ “ໜຶ່ງແລວ-ໜຶ່ງເສັ້ນທາງ” ພັດທະນາດ້ວຍຄຸນນະພາບສູງ, ປະຕິບັດວຽກງານ ກ່ຽວກັບ ການເຮັດໃຫ້ການລະບາຍກາກບອນດີອົກຊິດ ເຖິງຈຸດສູງສຸດ ແລະ ການປ່ອຍກາກບອນດີອົກຊິດ ໃຫ້ມີການຄຸ້ມຄອງເປັນລະບຽບ. ໃນຂະນະດຽວກັນ, ກອງປະຊຸມຍັງໄດ້ເນັ້ນໜັກວ່າ ຕ້ອງຮັບປະກັນຊີວິດການເປັນຢູ່ຂອງປະຊາຊົນ ແລະ ການຜະລິດຢ່າງປອດໄພໃຫ້ດີ, ປະຕິບັດການປ້ອງກັນ ແລະ ຄວບຄຸມການລະບາດຂອງພະຍາດໂຄວິດ-19 ໃຫ້ມີປະສິດທິຜົນ, ສືບຕໍ່ຊຸກຍູ້ວຽກງານສັກວັກຊີນໃຫ້ປະຊາຊົນ.

ວັນທີ 24/08/2021, ສະຫາຍ ຢາງເຈສີ, ກຳມະການກົມການເມືອງສູນກາງພັກກອມມູນິດຈີນ, ຫົວໜ້າຫ້ອງການຄະນະກຳມະການວຽກງານການຕ່າງປະເທດສູນກາງພັກກອມມູນິດຈີນ ໄດ້ເຂົ້າຮ່ວມ ແລະ ກ່າວຄຳເຫັນໃນກອງປະຊຸມຜູ້ຕາງ ໜ້າວຽກງານຄວາມໝັ້ນຄົງລະດັບສູງ ຄັ້ງທີ 11 ຂອງກຸ່ມປະເທດບຣິກສ໌ (BRICS) ຜ່ານຮູບແບບວິດີໂອທາງໄກ ຢູ່ນະຄອນຫຼວງປັກກິ່ງ, ໂດຍມີຄຳເຫັນວ່າ: “ກຸ່ມປະເທດບຣິກສ໌ ຄວນປະຕິບັດຕາມທິດຊີ້ນຳຮ່ວມຂອງຜູ້ນຳ 5 ປະເທດ, ຍຶດໝັ້ນຈິດໃຈບຣິກສ໌ ທີ່ເປີດປະຕູສູ່ພາຍນອກ, ກວມລວມ, ຮ່ວມມືກັນ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດ, ເພີ່ມທະວີການປຶກສາຫາລື ແລະ ແລກປ່ຽນກັນທາງຍຸດທະສາດ, ເພີ່ມຄວາມໄວ້ເນື້ອເຊື່ອໃຈກັນທາງການເມືອງ, ລົງເລິກການປະສານງານໃນວຽກງານຄວາມໝັ້ນຄົງ ແລະ ກະກຽມວຽກງານຕ່າງໆ ກ່ຽວກັບການພົບປະກັນລະຫວ່າງ ຜູ້ນຳກຸ່ມປະເທດບຣິກສ໌ ຄັ້ງທີ 13 ທີ່ຈະຈັດຂຶ້ນໃນໄວໆນີ້”. ກອງປະຊຸມໄດ້ແລກປ່ຽນຄຳເຫັນຢ່າງເລິກເຊິ່ງກ່ຽວກັບຫົວຂໍ້ຕ່າງໆເຊັ່ນ: ບັນຫາຈຸດສຸມຂອງພາກພື້ນ ແລະ ສາກົນ, ການຮ່ວມມືລະຫວ່າງອົງການປະຕິບັດກົດໝາຍ, ຄວາມປອດໄພດ້ານສາທາລະນະສຸກ, ການຕໍ່ຕ້ານລັດທິກໍ່ການຮ້າຍ ແລະ ຄວາມໝັ້ນຄົງທາງອິນເຕີເນັດ ແລະ ບັນຫາອື່ນໆ.

**3) ພັກກອມມູນິດກູບາ**

ວັນທີ 31 ກໍລະກົດ 2021, ສະຫາຍ Bruno Rodríguez, ລັດຖະມົນຕີຕ່າງປະເທດກູບາ ໄດ້ປະນາມອາເມລິກາ ທີ່ໃຊ້ມາດຕະການປິດລ້ອມທາງດ້ານເສດຖະກິດ-ການຄ້າ ແລະ ການເງິນຕໍ່ກູບາ ທີ່ນັບມື້ຮຸນແຮງຂຶ້ນ ໃນໄລຍະການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19, ເຊິ່ງລວມມີ 234 ມາດຕະການ, ໂດຍການນຳໃຊ້ສື່ສັງຄົມອອນລາຍ ແລະ ປະຕິບັດການທາງເຕັກໂນໂລຊີ ເຜີຍແຜ່ຂໍ້ມູນຂ່າວສານທີ່ບິດເບືອນຄວາມເປັນຈິງຕໍ່ຊາວໂລກ ເພື່ອບັ່ນທອນຄວາມໝັ້ນຄົງແຫ່ງຊາດກູບາ, ຊຶ່ງອາເມລິກາເອງ ເປັນຜູ້ຢູ່ເບື້ອງຫຼັງເຫດການຄວາມວຸ້ນວາຍທີ່ເກີດຂຶ້ນ ໃນວັນທີ 11 ກໍລະກົດ 2021 ທີ່ຜ່ານມາ. ສະຫາຍ Bruno Rodríguez ໄດ້ປະຕິເສດທຸກມາດຕະການລົງໂທດ ຂອງອາເມລິກາ ຕໍ່ເຈົ້າໜ້າທີ່ລະດັບສູງຂອງກູບາ ແລະ ຮຽກຮ້ອງໃຫ້ປະທານາທິບໍດີອາເມລິກາຄົນປະຈຸບັນ ຍົກເລີກມາດຕະການທີ່ໂຫດຮ້າຍ ທີ່ກຳນົດໂດຍລັດຖະບານສະໄໝ ປະທານາທິບໍດີ ໂດນັນ ທຣຳ ແລະ ຟື້ນຟູສາຍພົວພັນກັບກູບາ ຄືນໃໝ່.

# II. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກ

## 1. ການພົບປະ ລະຫວ່າງສອງຄະນະພົວພັນຕ່າງປະເທດສູນກາງພັກ ລາວ-ຫວຽດນາມ



ໃນວັນທີ 9 ສິງຫາ 2021, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ ໄດ້ຕ້ອນຮັບ ແລະ ພົບປະເຮັດວຽກ ກັບ ສະຫາຍ ເລ ຮວາຍ ຈຸງ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ພ້ອມດ້ວຍຄະນະ ໃນໂອກາດຕິດຕາມຄະນະຜູ້ແທນຂັ້ນສູງຂອງ ພັກ, ລັດ ສສ ຫວຽດນາມ ນຳໂດຍ ສະຫາຍ ຫງວຽນຊວັນຟຸກ, ປະທານປະເທດ ແຫ່ງ ສສ ຫວຽດນາມ ພ້ອມພັນລະຍາ ມາຢ້ຽມຢາມສັນຖະວະໄມຕີ ສປປ ລາວ ຢ່າງເປັນທາງການ. ສອງຝ່າຍໄດ້ແຈ້ງໃຫ້ກັນຊາບສະພາບການພົ້ນເດັ່ນຂອງແຕ່ລະພັກ, ແຕ່ລະປະເທດ; ແລກປ່ຽນບາງທັດສະນະຕໍ່ສະພາບການຂອງພາກພື້ນ, ສາກົນ ແລະ ບາງບັນຫາ ທີ່ສອງຝ່າຍມີຄວາມສົນໃຈຮ່ວມກັນ; ຕີລາຄາຄືນ ການພົວພັນຮ່ວມມືລະຫວ່າງ ສອງພັກ ກໍຄືລະຫວ່າງ ສອງຄະນະພົວພັນຕ່າາງປະເທດສູນກາງພັກ ລາວ-ຫວຽດນາມ ໃນໄລຍະຜ່ານມາ ແລະ ປຶກສາຫາລືກ່ຽວກັບ ທິດທາງແຜນການຮ່ວມມືໃນຕໍ່ໜ້າ. ສອງຝ່າຍ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ ຜົນສຳເລັດຂອງການພັດທະນາ ເສດຖະກິດ-ສັງຄົມ ຂອງແຕ່ລະປະເທດ ໃນສະພາບຄວາມຫຍຸ້ງຍາກຂອງການແຜ່ລະບາດເຊື້ອພະຍາດໂຄວິດ-19; ຕີລາຄາສູງຕໍ່ການຈັດຕັ້ງຜັນຂະຫຍາຍ ຂໍ້ຕົກລົງລະຫວ່າງ ການນຳຂັ້ນສູງຂອງ ສອງພັກ, ສອງລັດ ກໍຄື ຂໍ້ຕົກລົງການຮ່ວມມືຂອງສອງຄະນະພົວພັນຕ່າງປະເທດສູນກາງພັກ ລາວ-ຫວຽດນາມ ໄລຍະສົກປີ 2021–2025 ເປັນຕົ້ນ: ການຝຶກອົບຮົມ ແລະ ບຳລຸງສ້າງ ພະນັກງານການນຳ, ພະນັກງານ ນຳພາ-ຄຸ້ມຄອງ ໃຫ້ແກ່ ພັກປະຊາຊົນປະຕິວັດລາວ; ການປະສານສົມທົບໃນການຈັດກອງປະຊຸມສຳມະນາທິດສະດີ ຄັ້ງທີ VIII ແລະ ການກະກຽມໃຫ້ແກ່ການຢ້ຽມຢາມ ແລະ ພົບປະກັນລະຫວ່າງ ການນຳຂັ້ນສູງຂອງ ສອງພັກ ລາວ-ຫວຽດນາມ ໃນຕໍ່ໜ້າ. ພ້ອມນັ້ນ, ສອງຝ່າຍ ຍັງໄດ້ເປັນເອກະພາບທີ່ຈະຮ່ວມກັນ ກະກຽມຈັດກິດຈະກຳຕ່າງໆເພື່ອສະເຫຼີມສະຫຼອງ ວັນສ້າງຕັ້ງສາຍພົວພັນການທູດ ລາວ-ຫວຽດນາມ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລາວ-ຫວຽດນາມ ຄົບຮອບ 45 ປີ ໃນປີ 2022.

**2. ຄະນະພົວພັນຕ່າງປະເທດ ເຜີຍແຜ່ເອກະສານສຳຄັນ ຂອງພັກຂອງຊາດ**






ໃນວັນທີ 17 ສິງຫາ 2021, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດຕັ້ງເຜີຍແຜ່ເຊື່ອມຊຶມວັນຍຶດອຳນາດທົ່ວປະເທດ 23 ສິງຫາ (23/08/1945 ແລະ 23/08/1975 – 23/08/2021) ແລະ ວັນລັດຖະທຳມະນູນແຫ່ງຊາດຄົບຮອບ 30 ປີ. ໃຫ້ກຽດປາຖະກະຖາໂດຍ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ໂດຍມີພະນັກງານທົ່ວຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມຢ່າງພ້ອມພຽງ. ສະຫາຍ ຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ທວນຄືນມູນເຊື້ອການຕໍ່ສູ້ກູ້ຊາດ ອັນພິລະອາດຫານຂອງບັນພະບູລຸດ ດ້ວຍນ້ຳໃຈຮັກຊາດ, ຄຽດແຄ້ນຕໍ່ການກົດຂີ່ຂູດຮີດຂອງພວກລ່າເມືອງຂຶ້ນທັງເກົ່າ ແລະ ໃໝ່ພາຍໃຕ້ການນຳພາອັນຖືກຕ້ອງສະຫຼາດສ່ອງໃສຂອງພັກກອມມູນິດອິນດູຈີນໃນເມື່ອກ່ອນ ກໍຄື ພັກປະຊາຊົນປະຕິວັດລາວໃນປັດຈຸບັນ ສາມາດຍາດໄດ້ໄຊຊະນະ, ສຳເລັດການປະຕິວັດຊາດ ປະຊາທິປະໄຕ ແລະ ສະຖາປະນາ ສປປ ລາວ ໃນປີ 1975, ເປີດສັງກາດໃໝ່ ໃຫ້ແກ່ການເປັນເຈົ້າຊາຕາກຳປະເທດຊາດ ຂອງ ປະຊາຊົນລາວ. ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ ສປປ ລາວ ໄດ້ຫັນໄປສູ່ການຄຸ້ມຄອງເສດຖະກິດ - ສັງຄົມ ດ້ວຍກົດໝາຍ, ຍ້ອນແນວນັ້ນ ລັດຖະທຳມະນູນສະບັບທຳອິດຂອງ ສປປ ລາວ ຈຶ່ງຖືກສ້າງຂຶ້ນ ແລະ ປະກາດໃຊ້ໃນວັນທີ 15 ສິງຫາ 1991 ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການຈັດຕັ້ງປະຕິບັດນະໂຍບາຍປ່ຽນແປງໃໝ່ໃຫ້ເຂົ້າສູ່ລວງເລິກ, ລັດຖະທຳມະນູສະບັບ ທຳອິດ ຈຶ່ງໄດ້ຮັບການປັບປຸງ ໃນປີ 2003 ແລະ ປີ 2015 ຊຶ່ງແມ່ນສະບັບທີ່ນຳໃຊ້ມາເຖິງປັດຈຸບັນ. ລັດຖະທຳມະນູນແຫ່ງ ສປປ ລາວ ແມ່ນໝາກຜົນລວມຍອດຂອງການປະຕິວັດຊາດ-ປະຊາທິປະໄຕປະຊາຊົນ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ແລະ ແມ່ນຜົນງານອັນໃຫຍ່ຫຼວງ ຂອງປະຊາຊົນລາວບັນດາເຜົ່າ ໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ກໍຄືພາລະກິດປ່ຽນແປງໃໝ່ຮອບດ້ານ ມີຫຼັກການຂອງພັກ, ເປັນການຢືນຢັນເຖິງຄວາມເປັນເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ຂອງປະເທດຊາດຕໍ່ສາກົນ; ທັງສ່ອງແສງຢ່າງຈະແຈ້ງ ແລະ ຄົບຖ້ວນ ເຖິງຄວາມມຸ້ງມາດປາຖະໜາອັນສູງສົ່ງ ແລະ ຄວາມເດັດດ່ຽວຕັດສິນໃຈຢ່າງແຮງກ້າ ຂອງວົງຄະນະຍາດແຫ່ງຊາດລາວ ເພື່ອພ້ອມກັນສູ້ຊົນບຸກບືນສ້າງລັດເຮົາໃຫ້ເປັນລັດທີ່ປົກຄອງດ້ວຍກົດໝາຍ ຈາກປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນຢ່າງແທ້ຈິງ ເພື່ອໃຫ້ປະຊາຊົນຮັ່ງມີຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມມີຄວາມສາມັກຄີເປັນປຶກແຜ່ນ, ມີປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

### 3. ອົງຄະນະພັກ ຄຕພ ທາບທາມຮ່າງເນື້ອໃນເອກະສານ ແລະ ບຸກຄະລາກອນ ຮອບທີ 1





ໃນວັນທີ 27 ສິງຫາ 2021, ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ຈັດກອງປະຊຸມທາບທາມຮ່າງເນື້ອໃນເອກະສານ ແລະ ບຸກຄະລາກອນ ຮອບທີ 1 ເພື່ອກ້າວສູ່ກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ II ຂອງອົງຄະນະພັກຄະນະພົວພັນຕ່າງປະເທດສູນກາງພັກ, ໂດຍການເປັນປະທານຂອງສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ; ມີບັນດາສະຫາຍຄະນະບໍລິຫານງານພັກ ຄຕພ, ຜູ້ຕາງໜ້າຈາກຄະນະກວດກາສູນກາງພັກ, ຄະນະຈັດຕັ້ງສູນກາງພັກ, ຄະນະໜ່ວຍພັກ ແລະ ສະມາຊິກພັກສົມບູນ ແລະ ສຳຮອງ ພາຍໃນອົງຄະນະພັກ ຄຕພ ເຂົ້າຮ່ວມ.

ການທາບທາມຄັ້ງນີ້ ແມ່ນປະຕິບັດຕາມກົດລະບຽບຂອງພັກ ໂດຍສະເພາະແມ່ນ ຫຼັກການລວມສູນປະຊາທິປະ ໄຕ ທີ່ເປັນຫຼັກການພື້ນຖານຂອງພັກ, ທັງເປັນການເສີມຂະຫຍາຍສະຕິປັນຍາ ແລະ ເຕົ້າໂຮມເອົາຄຳຄິດຄຳເຫັນຂອງສະມາຊິກພັກ ປະກອບໃສ່ເນື້ອໃນເອກະສານ ແລະ ບຸກຄະລາກອນ ກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ II ຂອງອົງຄະນະພັກ ຄຕພ. ໃນພິທີ, ສະຫາຍ ສົມພອນ ສີຈະເລີນ, ຮອງເລຂາຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຂຶ້ນນຳສະເໜີຮ່າງລາຍງານການເມືອງ ກໍຄືໝາກຜົນຂອງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ I ຂອງອົງຄະນະພັກ ຄຕພ ໃນໄລຍະ 5 ປີຜ່ານມາ (2016-2020), ແຜນພັດທະນາ ຄຕພ ໄລຍະ 2021-2025 ແລະ ບົດສຳຫຼວດການນຳພາຂອງຄະນະບໍລິຫານງານພັກ ຄຕພ ເພື່ອໃຫ້ຜູ້ເຂົ້າຮ່ວມ ໄດ້ຄົ້ນຄວ້າ ແລະ ປະກອບຄຳຄິດເຫັນ ເຮັດໃຫ້ຮ່າງເອກະສານດັ່ງກ່າວມີເນື້ອໃນສົມບູນຍິ່ງຂຶ້ນ. ຫຼັງຈາກນັ້ນ, ໄດ້ດຳເນີນການປ່ອນບັດທາບທາມເອົາບຸກຄະລາກອນ ຮອບທີ I ເພື່ອກະກຽມໃຫ້ແກ່ການດຳເນີນກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ II ຂອງອົງຄະນະພັກ ຄຕພ ທີ່ຈະຈັດຂຶ້ນໃນຕໍ່ໜ້າ, ຮັບປະກັນທາງດ້ານໂຄງປະກອບ ໃຫ້ມີລັກສະນະສົມສ່ວນ, ລັກສະນະສືບທອດຕໍ່ເນື່ອງ ໂດຍສະເພາະ ເພດ, ເຜົ່າ, ຮຸ່ນ (ໜຸ່ມ, ກາງ ແລະ ອາວຸໂສ).

## 4. ຄະນະພົວພັນຕ່າງປະເທດສູນກາງພັກ ປະກາດພະນັກງານຂັ້ນສູງ ແລະ ພະນັກງານຂັ້ນພະແນກ ອອກພັກການ-ຮັບອຸດໜູນບໍານານ




ໃນວັນທີ 31/8/2021, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດພິທີປະກາດພະນັກງານຂັ້ນສູງ ແລະ ຂັ້ນພະແນກອອກພັກການ-ຮັບອຸດໜູນບໍານານ, ພາຍໃຕ້ການເປັນປະທານຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ, ໂດຍມີ ຄະນະພັກ-ຄະນະນໍາ, ຄະນະກົມ ແລະ ພະນັກງານຫຼັກແຫຼ່ງ ພາຍໃນ ຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມ. ໃນພິທີ, ສະຫາຍ ນາງ ພອນດາວັນ ພົນສະຫວັນ, ຫົວໜ້າກົມຈັດຕັ້ງ-ພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຜ່ານມະຕິຕົກລົງ ຂອງ ຄະນະເລຂາທິການສູນກາງພັກ ສະບັບເລກທີ 80/ຄລສພ, ລົງວັນທີ 7/4/2021, ວ່າດ້ວຍການອະນຸມັດໃຫ້ ສະຫາຍ ສົມດີ ບຸນຄຸ້ມ, ກໍາມະການຄະນະພັກ, ປະທານກວດກາ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ອອກພັກການ-ຮັບອຸດໜູນບໍານານ. ພ້ອມນັ້ນ, ກໍໄດ້ຜ່ານຂໍ້ຕົກລົງ ຂອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ສະບັບເລກທີ 705/ຄຕພ.ຈພງ, ລົງວັນທີ 2/6/2021 ວ່າດ້ວຍການອະນຸມັດໃຫ້ ສະຫາຍ ວຽງບູລີ ແສນສູນທອນ, ຮອງຫົວໜ້າພະແນກ ອອກພັກການ-ຮັບອຸດໜູນບໍານານ.

ໃນໂອກາດດັ່ງກ່າວ, ສະຫາຍ ທອງສະຫວັນ ພົມວິຫານ ຕາງໜ້າຄະນະບໍລິຫານງານພັກຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ໃຫ້ກຽດໂອ້ລົມຕໍ່ພິທີ ໂດຍໄດ້ ຕີລາຄາສູງຕໍ່ຜົນງານ, ຄຸນງາມຄວາມດີ ຂອງສອງສະຫາຍ ທີ່ໄດ້ອຸທິດເຫື່ອແຮງ, ສະຕິປັນຍາ, ຄວາມຮູ້, ຄວາມສາມາດ ປະກອບສ່ວນຢ່າງຫ້າວຫັນ ເຂົ້າໃນການພັດທະນາວຽກງານການຕ່າງປະເທດຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ກໍຄືພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ດ້ວຍຄວາມຮັບຜິດຊອບສູງຕະຫຼອດໄລຍະຜ່ານມາ ແລະ ຈະຈົດຈໍາຜົນງານຂອງສອງສະຫາຍ ໄວ້ໃນການຈັດຕັ້ງຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ຕະຫຼອດໄປ.

# III. ການເຄື່ອນໄຫວວຽກງານ ຂອງອົງການຈັດຕັ້ງມະຫາຊົນ

1. **ສະຫະພັນກຳມະບານ ຄຕພ ເຜີຍແຜ່ກົດລະບຽບ ຂອງສະຫະພັນກຳມະບານລາວ ສະໄໝທີ VIII**



ໃນວັນທີ 18 ສິງຫາ 2021, ສະຫະພັນກຳມະບານ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດພິທີເຜີຍແຜ່ກົດລະບຽບ ຂອງສະຫະພັນກຳມະບານລາວ ສະໄໝທີ VIII, ໃຫ້ກຽດເຜີຍແຜ່ ໂດຍ ສະຫາຍ ສົມດີ ບຸນຄຸ້ມ, ກຳມະການຄະນະພັກ, ປະທານກວດກາ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ມີບັນດາສະຫາຍ ໃນສະຫະພັນກຳມະບານ ຄຕພ, ຄະນະໜ່ວຍກຳມະບານ ອ້ອມຂ້າງ ເຂົ້າຮ່ວມ. ສະຫາຍ ສົມດີ ບຸນຄຸ້ມ ໄດ້ຍົກໃຫ້ເຫັນ ສິດ, ໜ້າທີ່ ແລະ ພັນທະຂອງສະມາຊິກກຳມະບານ ຕະຫຼອດຮອດ ລະບົບການຈັດຕັ້ງຂັ້ນຕ່າງໆ ຂອງສະຫະພັນກຳມະບານ ລວມທັງນະໂຍບາຍ ການຍ້ອງຍໍ ຕໍ່ຜູ້ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ ເພື່ອໃຫ້ສະມາຊິກກຳມະບານ ກຳແໜ້ນ, ຝຶກຝົນຕົນເອງ ແລະ ມີສະຕິສູງ ຕໍ່ການຈັດຕັ້ງ ຮັບປະກັນຄວາມເປັນແບບຢ່າງໃຫ້ແກ່ມະຫາຊົນ.